## ລາຍງານກ່ຽວກັບການລະເມີດ Sanctuary Promise.

**ສາຍດ່ວນຂອງ Sanctuary Promise:**

1-844-924-7829

**ຊົ່ວໂມງເຮັດວຽກຂອງສາຍດ່ວນ:**

ວັນຈັນ–ວັນສຸກ

9 ໂມງເຊົ້າ ເຖິງ 5 ໂມງແລງ

ຝາກຂໍ້ຄວາມຫຼັງຈາກຊົ່ວໂມງເຮັດວຽກ. ການແປພາສາທີ່ມີຫຼາຍກວ່າ 240 ພາສາ. ພວກເຮົາຍອມຮັບການໂທສໍາລັບຄົນພິການທຸກໆສາຍ.

SanctuaryPromise.Oregon.gov

## ທ່ານຢູ່ຖືກບ່ອນແລ້ວ.

**ປອດໄພ.**

ທ່ານມີສິດທີ່ຈະມີຄວາມປອດໄພໃນການດໍາລົງຊີວິດໃນທຸກໆວັນຂອງທ່ານ.

**ກຽດສັກສີ.**

ທ່ານເປັນສ່ວນໜຶ່ງໃນຊຸມຊົນແຫ່ງນີ້ ແລະ ສົມຄວນໄດ້ຮັບການເຄົາລົບ.

**ສິດທິມະນຸດ.**

ທ່ານມີສິດທີ່ຈະຢູ່ຢ່າງສະຫງົບສຸກ ແລະ ມີຄວາມສຸກກັບຊຸມຊົນ, ຄອບຄົວ ແລະ ສະພາບແວດລ້ອມອ້ອມຮອບທ່ານ.

**ສະແກນຂ້ອຍ.**

SanctuaryPromise.Oregon.gov

**ເຊື່ອມຕໍ່ກັບພວກເຮົາ**

@ORcivilrights

@ORcivilrights

YOU BELONG.



# Sanctuary Promise ຂອງ ລັດ Oregon.

## ລັດ Oregon ແມ່ນບ້ານຂອງທ່ານ.

YOU BELONG.

## ໂທຫາສາຍດ່ວນຂອງ Sanctuary Promise ທີ່:

### ດຳເນີນການລາຍງານ.

ຖ້າທ່ານ ຫຼື ບາງຄົນທີ່ທ່ານຮູ້ຈັກ ໄດ້ກາຍເປັນເປົ້າໝາຍໃນການລະເມີດກົດໝາຍ Sanctuary Promise, ໃຫ້ລາຍງານກ່ຽວກັບມັນ.

### ພວກເຮົາສາມາດ

- ສະໜອງບົດແນະນຳກ່ຽວກັບການຮັກສາຄວາມລັບ ແລະ ສະໜັບສະໜູນໃຫ້ມີເອກະສານນັ້ນເປັນພາສາຂອງທ່ານ.
- ແນະນຳທ່ານໃຫ້ຮູ້ກ່ຽວກັບຊັບພະຍາກອນຕ່າງໆທີ່ຕິດພັນກັບການເຂົ້າເມືອງ
- ເປີດການສອບສວນໃນນາມຂອງລັດ
- ຊ່ວຍທ່ານກ່ຽວກັບຄວາມຊ່ວຍເຫຼືອທາງດ້ານການເງິນໃນກໍລະນີສຸກເສີນ
- ສ້າງແຜນການດ້ານຄວາມປອດໄພກັບທ່ານ

### ຖາມຄຳຖາມຕ່າງໆ.

**ບໍ່ແນ່ໃຈ ຖ້າມີຫຍັງເກີດຂຶ້ນມັນຈະແມ່ນການລະເມີດກົດໝາຍສັກສິດຫຼືບໍ່?**

ຂໍໃຫ້ໂທຫາພວກເຮົາ ແລະ ພວກເຮົາສາມາດແນະນຳທ່ານໄດ້.

## Sanctuary Promise ຂອງລັດ Oregon ແມ່ນຫຍັງ?

ໃນລັດ Oregon, ລັດຖະບານຂອງລັດ ແລະ ທ້ອງຖິ່ນ, ລວມມີ ຕຳຫຼວດ, ບໍ່ໄດ້ຮັບອະນຸຍາດໃຫ້ບັງຄັບໃຊ້ກົດໝາຍກ່ຽວກັບການເຂົ້າເມືອງຂອງລັດຖະບານກາງ ນອກຈາກວ່າພວກເຮົາໄດ້ມີຄຳສັ່ງຂອງສານທີ່ເຊັນໂດຍຜູ້ພິພາກສາ.

### ເວລາໃດທີ່ຈະລາຍງານກ່ຽວກັບການລະເມີດ Sanctuary Promise?

- ຖ້າວ່າ ຕຳຫຼວດຖາມທ່ານກ່ຽວກັບຊາດກຳເນີດຂອງທ່ານ ຫຼື ສະຖານະພາບການເຂົ້າເມືອງຂອງທ່ານ.
- ຖ້າທ່ານເຫັນລັດຖະບານຂອງລັດ ຫຼື ທ້ອງຖິ່ນ ຫຼື ຕຳຫຼວດ ມີການປະສານສົມທົບກັບອົງການກວດຄົນເຂົ້າເມືອງຂອງລັດຖະບານກາງ.
- ຖ້າທ່ານເຫັນຕຳຫຼວດເຮັດວຽກຮ່ວມກັບ ສຳນັກງານກວດຄົນເຂົ້າເມືອງ ແລະ ພາສີ (Immigration and Customs Enforcement, ICE) ເພື່ອປະສານງານໃຫ້ມີການຢຸດການຈະລາຈອນ.
- ຖ້າບຸກຄົນທີ່ຢູ່ໃນຄຸກ ຫຼື ຢູ່ໃນໄລຍະຄວບຄຸມພຶດຕິກຳ ເຊິ່ງຖືກປະຕິເສດທີ່ຈະໄດ້ຮັບການບໍລິການ, ຜົນປະໂຫຍດ ຫຼື ສິດທິພິເສດໂດຍອີງຕາມສະຖານະພາບການເຂົ້າເມືອງຂອງເຂົາເຈົ້າ.
- ຖ້າທ່ານຖືກຈັບກຸມໃນສານ ຫຼື ໃນຂະນະທີ່ທ່ານເດີນທາງໄປ ຫຼື ອອກຈາກສານ, ໂດຍປັດສະຈາກຄຳສັ່ງຂອງສານທີ່ເຊັນໂດຍຜູ້ພິພາກສາ.
- ບໍ່ແນ່ໃຈ?
  **ຂໍໃຫ້ໂທຫາພວກເຮົາ.**

## ວິໄສທັດຂອງພວກເຮົາ

ລັດ Oregon ເປັນສະຖານທີ່ໆມີຄວາມປອດໄພ, ບ່ອນທີ່ຍິນດີຕ້ອນຮັບທຸກຄົນ, ລວມມີ, ແລະ ມີໂອກາດທີ່ເທົ່າທຽມເພື່ອຈະສ້າງອິດສະຫຼະພາບຈາກຄວາມຊັງ ແລະ ການຈຳແນກຄວາມແຕກຕ່າງ, ແລະ ບ່ອນທີ່ສະຖາບັນການຈັດຕັ້ງຕ່າງໆຂອງພວກເຮົາໃຫ້ການສະໜັບສະໜູນ ແລະ ຕອບສະໜອງຄວາມຕ້ອງການຂອງປະຊາຊົນ.

ລັດ *Oregon* ແມ່ນລັດທຳອິດຂອງປະເທດທີ່ສ້າງກົດໝາຍສັກສິດໃນປີ *1987.*